ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ
ຫ້ອງວ່າການແຂວງ

ເລກທີ 2108 /ຫວຂ
ອຸດົມໄຊ, ວັນທີ 26 ເມສາ 2022

# ແຈ້ງການ

**ຮຽນ:** ບັນດາພະແນກການ, ອົງການທຽບເທົ່າ, 2 ກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຈົ້າເມືອງ 7 ເມືອງ, ລັດວິສາຫະກິດ, ອົງການຈັດຕັ້ງພັກ-ລັດ ແລະ ເອກະຊົນ ທຸກພາກສ່ວນທົ່ວແຂວງ ຊາບ.

**ເລື່ອງ:** ການພັກຊົດເຊີຍ ວັນກຳມະກອນສາກົນ (ວັນທີ 01 ພຶດສະພາ 2022).

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການແຂວງອຸດົມໄຊ ສະບັບເລກທີ 385/ຈຂ.ອຊ, ລົງວັນທີ 05 ພຶດສະພາ 2021;
- ອີງຕາມ ດຳລັດວ່າດ້ວຍວັນພັກ ສະບັບເລກທີ 386/ລບ, ລົງວັນທີ 15 ທັນວາ 2017;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 545/ຫສນຍ, ລົງວັນທີ 21 ເມສາ 2022;
- ອີງຕາມ ທິດຊີ້ນຳຂອງການນຳແຂວງອຸດົມໄຊ ຄັ້ງວັນທີ 25 ເມສາ 2022.

ຫ້ອງວ່າການແຂວງ ຂໍຖືເປັນກຽດຢ່າງສູງ ແຈ້ງມາຍັງບັນດາທ່ານຊາບດັ່ງນີ້: ເນື່ອງຈາກ ວັນກຳມະກອນສາກົນ ວັນທີ 01 ພຶດສະພາ 2022 ນີ້ ແມ່ນກົງກັບວັນອາທິດ ເຊິ່ງເປັນວັນພັກທາງລັດຖະການ (ວັນພັກປະຈຳອາທິດ), ສະນັ້ນ ຈຶ່ງກຳນົດເອົາ ວັນຈັນ, ວັນທີ 02 ພຶດສະພາ 2022 ເປັນວັນພັກຊົດເຊີຍວັນກຳມະກອນສາກົນ ປີ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງວ່າການແຂວງ**

ແຂວງອຸດົມໄຊ
ຫ້ອງວ່າການ

**ນ.ອຳໄພວອນ ປັນຍາລັກ**

**ບ່ອນນຳສົ່ງ:**

1. ບັນດາພະແນກການ, ອົງການຈັດຕັ້ງພັກ-ລັດ ພາກສ່ວນລະ 1 ສະບັບ
2. ເຈົ້າເມືອງ 7 ເມືອງ, ເມືອງລະ 1 ສະບັບ
3. ເກັບຮັກສາໄວ້ 1 ສະບັບ

ພະແນກຄຸ້ມຄອງບໍລິຫານ, ພິທີການ ແລະ ການເງິນ, ໂທ 081 312 562, 312 060

สแกนด้วย CamScanner